File B - ATTT 4

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---------------------

ກະຊວງສາທາລະນະສຸກ

ເລກທີ 394 /ກຊສ

## ມະຕິຕົກລົງ ຂອງ ລັດ ຖະມົນຕີ

ກະຊວງສາທາລະນະສຸກ ກ່ຽວກັບການຮັບຮອງເອົາ
" ນະໂຍບາຍແຫ່ງຊາດສົ່ງເສີມການແພດ ແລະ ຢາພື້ນເມືອງ
ຂອງ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ "

- ອີງຕາມແນວທາງນະໂຍບາຍ ຂອງພັກ ແລະ ລັດຖະບານເຮົາໃນການສົ່ງເສີມການປະສານສົມທົບລະຫວ່າງສອງຂົງເຂດການແພດ,ການຢາພື້ນເມືອງ ແລະ ສາກົນ.

- ອີງຕາມມະຕິຕົກລົງ ຂອງ ສະພາລັດຖະມົນຕີ ສະບັບເລກທີ 31/ ປສລ, ລົງວັນທີ 2/5/1989 ວ່າດ້ວຍການຄຸ້ມຄອງຕິດຕາມການກວດກາ ຂາອອກ-ຂາເຂົ້າ,ຜະລິດ ແລະ ຈຳໜ່າຍ ຢາປົວພະຍາດ ແລະ ວັດຖຸທີ່ເປັນຢາ.

- ອີງຕາມນະໂຍບາຍ ຂອງ ອົງການ ອະນາໄມໂລກ, ເຊິ່ງຖືວ່າການຂະຫຍາຍການນຳໃຊ້ຢາພື້ນເມືອງມີຄວາມສຳຄັນໃນການປະກອບສ່ວນເຂົ້າໃນການຮັກສາສຸຂະພາບຂັ້ນຕົ້ນ ຂອງ ມວນມະນຸດ.

- ອີງຕາມມະຕິ ຂອງ ກອງປະຊຸມຄົ້ນຄ້ວາຮ່າງນະໂຍບາຍແຫ່ງຊາດສົ່ງເສີມການແພດ ແລະ ຢາພື້ນເມືອງໃນວັນທີ 14/12/95.

- ອີງຕາມການສະເໜີ ຂອງສະຖາບັນຄົ້ນຄ້ວາຕົ້ນໄມ້ເປັນຢາ ແລະ ບັນດາຜູ້ແທນ ຂອງພະແນກສາທາລະນະສຸກບັນດາແຂວງ-ກຳແພງນະຄອນ ແລະ ເຂດພິເສດ, ບັນດາກົມກອງ, ສະຖາບັນ, ໂຮງໝໍໂຮງຮຽນ ຂັ້ນຂ້າງກະຊວງສາທາລະນະສຸກ ໃນກອງປະຊຸມທົ່ວປະເທດເພື່ອຄົ້ນຄ້ວາຮ່າງນະໂຍບາຍແຫ່ງຊາດສົ່ງເສີມການແພດ ແລະ ຢາພື້ນເມືອງ ຂອງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ລົງວັນທີ 12 -14 / 12/95.



สแกนด้วย CamScanner

ລັດຖະມົນຕີກະຊວງສາທາລະນະສຸກ ອອກມະຕິຕົກລົງ :

<u>ມາດຕາ 1</u> : ຮັບຮອງເອົານະໂຍບາຍແຫ່ງຊາດສົ່ງເສີມການແພດ ແລະ ຢາພື້ນເມືອງ ຂອງ ສ.ປ.ປ.ລາວ ທີ່ກອງປະຊຸມຢາພື້ນເມືອງທົ່ວປະເທດຄັ້ງວັນທີ12-14/12/1995 ໄດ້ມີມະຕິຮັບຮອງເອົາ.

<u>ມາດຕາ 2</u> : ຈັດຕັ້ງຄະນະກຳມະການ ນະໂຍບາຍສົ່ງເສີມການແພດ ແລະ ຢາພື້ນເມືອງ ປະກອບດ້ວຍ ບັນດາອົງການຈັດຕັ້ງຕ່າງໆທີ່ກ່ຽວຂ້ອງ ຄື :

| | |
|---|---|
| 1. ທ່ານ ດຣ. ຄຳພາຍ ລັດສະໜີ | ເປັນປະທານ |
| 2. ສະຖາບັນຄົ້ນຄວ້າຕົ້ນໄມ້ເປັນຢາ | 01 ທ່ານ |
| 3. ກົມອາຫານ ແລະ ຢາ | 01 ທ່ານ |
| 4. ກົມປິ່ນປົວ | 01 ທ່ານ |
| 5. ກົມຈັດຕັ້ງກໍ່ສ້າງພະນັກງານ | 01 ທ່ານ |
| 6. ຄະນະພະແນກສາທາລະນະສຸກ ແຂວງໆລະ | 01 ທ່ານ |

<u>ມາດຕາ 3</u> : ພາລະບົດບາດ ສິດ ໜ້າທີ່ ຂອງ ຄະນະກຳມະການ ສົ່ງເສີມການແພດ ແລະ ຢາພື້ນເມືອງ

★ <u>ພາລະບົດບາດ</u> :

- ຄົ້ນຄວ້າບົດແນະນຳ ປະຕິບັດ ແລະ ຜັນຂະຫຍາຍນະໂຍບາຍສົ່ງເສີມການແພດ ແລະ ການຢາພື້ນເມືອງຢ່າງກວ້າງຂວາງໃນບັນດາຮາກຖານສາທາລະນະສຸກ.

- ຊີ້ນຳກວດກາຕິດຕາມການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວໃຫ້ປະກົດຜົນເປັນຈິງ

สแกนด้วย CamScanner

★ <u>ສິດ ແລະ ໜ້າທີ່ :</u>

- ຊຸກຍູ້ບັນດາພະແນກ ສາທາລະນະສຸກ ແຂວງ - ກຳແພງນະຄອນ ແລະ ເຂດພິເສດ ຈັດຕັ້ງສະຖານີປາປິ້ນເມືອງ ຂອງຕົນເພື່ອເປັນຫົວໜ່ວຍບໍລິຫານສະເພາະເພື່ອໄຫວຊີ້ນຳ ການປະສານສົມທົບສອງຂົງເຂດການແພດພື້ນເມືອງ ແລະ ສາກົນ ຢູ່ໃນອາກຖານສາທາລະນະສຸກ ຂອງຕົນໃຫ້ໄດ້ດີ ນຳເອົາວຽກງານປາປິ້ນເມືອງເຂົ້າໃນວຽກງານຮັກສາສຸຂະພາບຂັ້ນຕົ້ນຢ່າງກວ້າງຂວາງ.

<u>ມາດຕາ 4</u> : ມະຕິຕົກລົງສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ 27/12/95

ລັດຖະມົນຕີກະຊວງສາທາລະນະສຸກ.

ກະຊວງສາທາລະນະສຸກ

ລັດຖະມົນຕີ

ສາດສະດາຈານ ວັນນະເລດ ລາດສະໂໜ

<u>ບ່ອນນຳສົ່ງ</u> :

- ສຳນັກງານນາຍົກລັດຖະມົນຕີ 01 ສະບັບ
- ແຂວງ -ກຳແພງ - ເຂດພິເສດ 18 ສະບັບ
- ບັນດາກົມກອງ, ສະຖາບັນ, ໂຮງໝໍ, ໂຮງຮຽນ ອ້ອມຂ້າງກະຊວງສາທາລະນະສຸກ ບ່ອນລະ 01 ສະບັບ
- ສຳເນົາ 01 ສະບັບ.

สแกนด้วย CamScanner

File Att-doc. 1-3

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

------------------------

# ບັນທຶກກອງປະຊຸມ

## ແຜນລວມນະໂຍບາຍແຫ່ງຊາດດ້ານຢາພື້ນເມືອງ

ອີງຕາມຂໍ້ຕົກລົງ ຂອງ ທ່ານ ລັດຖະມົນຕີ ກະຊວງສາທາລະນະສຸກ ເລກທີ 1777/ກຊສ, ລົງວັນທີ 28/11/95, ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບກອງປະຊຸມກະກຽມ, ຮ່າງແຜນນະໂຍບາຍແຫ່ງຊາດດ້ານຢາພື້ນເມືອງ, ເຊິ່ງປະກອບດ້ວຍ :

1. ທ່ານ ດຣ. ຄຳພາຮູ ລັດສະຫມີ ຮອງລັດຖະມົນຕີກະຊວງສາທາລະນະສຸກ ເປັນປະທານ
2. ທ່ານ ຄຳເຫືອງ ຫຼວງສົມພູ ເປັນຮອງປະທານ
3. ທ່ານ ດຣ. ບຸນໂຮງ ສຸດທະວົງ ເປັນກຳມະການ
4. ທ່ານ ດຣ. ກອງມະນີ ສີກາລາ ເປັນກຳມະການ
5. ທ່ານ ດຣ. ເກດສະຫນາ ລັດຊະຈັກ ເປັນກຳມະການ

ກອງປະຊຸມໄດ້ດຳເນີນມາແຕ່ວັນທີ 12 ເຖິງ 14 ທັນວາ 1995, ໂດຍການເຂົ້າຮ່ວມ ຂອງ ບັນດາຜູ້ແທນຈາກພາກສ່ວນຕ່າງໆ ອ້ອມຂ້າງສູນກາງ, ບັນດາແຂວງ, ກຳແພງນະຄອນ ແລະ ເຂດພິເສດ, ອົງການ ພ.ສ.ລ, ອົງການອະນາໄມໂລກ ປະຈຳລາວ ແລະ ພາກພື້ນອາຊີປາຊີຟິກ, ພ້ອມດ້ວຍ ຜູ້ຊ່ຽວຊານການພິເສດຂອງລາວ ທີ່ໄປທຳການຢູ່ຕ່າງປະເທດອີກສະຖານີ.

ພິທີໄຂກອງປະຊຸມໄດ້ເລີ່ມຂຶ້ນໃນເວລາ 8 ໂມງ 30 ຂອງ ວັນທີ 12 ທັນວາ 1995, ໂດຍການເຂົ້າຮ່ວມ ເປັນກຽດ ຂອງ ທ່ານ ສາດສະດາຈານ ວັນນະເລດ ລາດຊະໂພ ຜູ້ອຳນວຍການ ລັດຖະມົນຕີ ກະຊວງສາທາລະນະສຸກ, ພ້ອມທັງໄດ້ກ່າວໄຂພິທີ.

ພາຍຫຼັງພິທີເປີດຢ່າງເປັນທາງການໄດ້ສິ້ນສຸດລົງ, ພາຍໃຕ້ການເປັນປະທານ ຂອງ ທ່ານ ດຣ.ຄຳພາຮູ ລັດສະຫມີ , ຮອງລັດຖະມົນຕີ ກະຊວງສາທາລະນະສຸກ, ຮັບຜິດຊອບຊີ້ນຳວຽກງານການຢາ ແລະ ຢາພື້ນເມືອງ, ທີ່ປະຊຸມໄດ້ສືບຕໍ່ຟັງການລາຍງານ ຂອງ ບັນດາ ທ່ານ ຜູ້ແທນຈາກແຂວງ, ກຳແພງນະຄອນ,ເຂດພິເສດ ແລະ ການປະກອບຄຳເຫັນ ຂອງ ບັນດາກົມກອງຕ່າງໆອ້ອມຂ້າງສູນກາງ, ອົງການ ພ.ສ.ລ ແລະ ຊ່ຽວຊານ ຈາກອົງການອະນາໄມໂລກ ແລະ ຜູ້ຊ່ຽວຊານພິເສດ.

ຜ່ານການຄົ້ນຄວ້າເປັນຫນ່ວຍ ແລະ ແລກປ່ຽນຄຳຄິດຄຳເຫັນລວມຫມູ່ໃສ່ສ້າງນະໂຍບາຍແຫ່ງຊາດດ້ານປ່າຟື້ນເມືອງໃຫ້ເປັນອັນສົມບູນຍິ່ງຂຶ້ນ, ທີ່ປະຊຸມໄດ້ເປັນເອກະພາບເຫັນດີໃນບາງບັນຫາດັ່ງລຸ່ມນີ້ :

1. ເຫັນດີໃຫ້ມີນະໂຍບາຍ ດ້ານປ່າຟື້ນເມືອງ

2. ເຫັນດີ ດັດແປງຫົວຂໍ້ ຂອງ ນະໂຍບາຍຈາກ " ນະໂຍບາຍແຫ່ງຊາດດ້ານປ່າຟື້ນເມືອງ " ມາເປັນ " ນະໂຍບາຍແຫ່ງຊາດວ່າດ້ວຍການສົ່ງເສີມການແພດ ແລະ ປ່າຟື້ນເມືອງ "

3. ເຫັນດີໃຫ້ມີຄະນະກຳມະການຂຶ້ນເພື່ອປັບປຸງເນື້ອໃນ ຂອງ ນະໂຍບາຍ ໃຫ້ເປັນອັນລະອຽດ ແລະ ສົມບູນກວ່າເກົ່າ.

4. ເຫັນດີ ສ້າງປຶ້ມແນະນຳເພີ່ມເຕີມລະອຽດພາຍຫຼັງມີນະໂຍບາຍອັນສົມບູນທີ່ໄດ້ເຊັນຮັບຮອງຢ່າງເປັນທາງການແລ້ວ.

5. ເຫັນດີຮັບເອົາໂຄງການສົ່ງເສີມສຸຂະພາບ ຂອງ ຊຸມຊົນ ໂດຍການນຳໃຊ້ປ່າຟື້ນເມືອງຢູ່ໃນບາງແຂວງ, ເມືອງ ແລະ ບ້ານ ຕາມການສະເຫນີ ຂອງ ອົງການອະນາໄມໂລກ ປະຈຳພາກພື້ນ.

6. ເຫັນດີສ້າງ ພາລະບົດບາດ, ສິດ - ຫນ້າທີ່ ຂອງ ສະຖາບັນຄົ້ນຄວ້າຕົ້ນໄມ້ເປັນຢາ ແລະ ສະຖາບັນປ່າຟື້ນເມືອງ ຄືນໃຫມ່ ໃຫ້ເປັນລະບົບຄົບຊຸດ ແຕ່ສູນກາງລົງຮອດຮາກຖານ.

ວຽງຈັນ,ວັນທີ 14 ທັນວາ 1995.

ປະທານ ກອງປະຊຸມ.

ກະຊວງສາທາລະນະສຸກ

ລັດຖະມົນຕີ

ດຣ. ຄຳພາຍ ລັດສະໝີ

สแกนด้วย CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງສາທາລະນະສຸກ

# ນະໂຍບາຍວ່າດ້ວຍ
# ການສົ່ງເສີມການແພດ ແລະ ຢາພື້ນເມືອງ
# ໃນສາທາລະນະລັດປະຊາທິປະໄຕປະຊາຊົນລາວ

*

## I. <u>ວ່າດ້ວຍຈຸດປະສົງຂອງການວາງນະໂຍບາຍແຫ່ງຊາດດ້ານຢາພື້ນເມືອງ:</u>

ການວາງນະໂຍບາຍແຫ່ງຊາດ ດ້ານຢາພື້ນເມືອງສຳລັບປະເທດເຮົາ ແມ່ນສອດຄ່ອງກັບສະພາບຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມວັດທະນາທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດເຮົາໃນປະຈຸບັນ, ຈຸດປະສົງຕົ້ນຕໍແມ່ນແນໃສ່ບາງດ້ານສີ່ດັ່ງລຸ່ມນີ້ :

1- ເພື່ອຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດ, ທິດນຳຂອງສາທາລະນະສຸກ ໃນດ້ານການປະສານສົມທົບ ລະຫວ່າງສອງຂົງເຂດ ການແພດ ແລະ ການຢາ ໃຫ້ປະກົດຜົນເປັນຈິງ ແນໃສ່ນຳໃຊ້ກຳລັງແຮງຂອງການແພດພື້ນເມືອງປະກອບສ່ວນຄຽງບ່າຄຽງໄຫຼ່ ກັບການແພດທັນສະໄໝ ເພື່ອຍົກສູງສຸຂະພາບຂອງປະຊາຊົນບັນດາເຜົ່າ ໃຫ້ດີຂື້ນເທື່ອລະກ້າວ.

2- ເພື່ອຂຸດຄົ້ນ, ປົກປັກຮັກສາ ແລະ ເສີມຂະຫຍາຍມູນມໍລະດົກອັນປະເສີດ ທີ່ບັນພະບູລຸດເຮົາໄດ້ສ້າງມາໄວ້ໃຫ້ຄົນລຸ້ນຫຼັງພວກເຮົາສືບທອດ.

3- ເພື່ອຍົກສູງຄຸນນະພາບຂອງຢາພື້ນເມືອງ, ສົ່ງເສີມການຄົ້ນຄ້ວາວິທະຍາສາດດ້ານຢາພື້ນເມືອງ, ເຮັດໃຫ້ຢາພື້ນເມືອງລາວ ຂອງ ເຮົາໄດ້ຮັບການຢັ້ງຢືນ ຢ່າງມີວິທະຍາສາດ ເທື່ອລະກ້າວ.

4- ເພື່ອເຮັດໃຫ້ການຈັດຕັ້ງຂອງວິຊາການ ຂະແໜງຢາພື້ນເມືອງ-ຊັບພະຍາກອນການຢາຂອງປະເທດເຮົາ ໄດ້ຮັບການປັບປຸງ ແລະ ຂະຫຍາຍຕໍ່ໄປທົ່ວທຸກເຂດແຂວງ, ເຄື່ອນໄຫວຢ່າງມີປະສິດທິຜົນເພື່ອຍາດແຍ່ງຄວາມເປັນໃຈສະໜັບສະໜູນແລະຊ່ວຍເຫຼືອຈາກປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນຕ່າງໆ...



สแกนด้วย CamScanner

## II - *ພື້ນຖານການກຳນົດນະໂຍບາຍແຫ່ງຊາດ ກ່ຽວກັບການສົ່ງເສີມການນຳໃຊ້ຢາພື້ນເມືອງ:*

ການກຳນົດນະໂຍບາຍແຫ່ງຊາດ ດ້ານຢາພື້ນເມືອງແມ່ນອີງໃສ່ບັນພື້ນຖານ 6 ປະການດັ່ງລຸ່ມນີ້ :

1- ແນວທາງນະໂຍບາຍຂອງພັກ ແລະ ລັດຖະບານເອົາໃນການເພີ່ມທະວີການບໍລິການ ດ້ານສາທາລະນະສຸກໃຫ້ປະຊາຊົນບັນດາເຜົ່າ ໃຫ້ນັບມື້ນັບດີ ແລະ ທົ່ວເຖິງ. ກອງປະຊຸມໃຫຍ່ຄັ້ງທີ V ຂອງພັກເຮົາໄດ້ ຢັ້ງຢືນວ່າ " ... *ການປ້ອງກັນສຸຂະພາບ ກັບພະຍາດ ດ້ານພະຍຸ ແລະ ການປິ່ນປົວ ສົມທົບການຢາ ແລະ ການແພດພື້ນເມືອງ ແລະສາກົນທັງສອງປະເພດນີ້ລ້ວນແຕ່ຖືເທົ່າທຽມກັນ. ເງື່ອນໄຂຂອງປະເທດເຮົາແມ່ນອຸດົມຮັ່ງມີທີ່ສຸດ, ຖ້າຮູ້ໃຊ້ສອງການແພດແລະການຢາດັ່ງກ່າວຈະກາຍເປັນກຳລັງແຮງສັງລວມຂອງປະເທດ ເຮົາໃນອານາຄົດ.*

( ຄັດຈາກເອກະສານຂອງກອງປະຊຸມ ສາທາລະນະສຸກ ທົ່ວປະເທດຄັ້ງທີ III, ເລກທີ່ 599/ກຊສ, ວັນທີ 28/05/1992. )

2- ນະໂຍບາຍແຫ່ງຊາດດ້ານຢາ-ພາກຢາພື້ນເມືອງ:

( ໜ້າທີ່ 46, ອົງປະກອບທີ່ 12. ດ້ານຢາພື້ນເມືອງ ທີ່ ທ່ານນາຍົກລັດຖະມົນຕີ ຄຳໄຕ ສີພັນດອນໄດ້ເຊັນຮັບຮອງເອົາໃນວັນທີ 13/3/1993).

3-ນະໂຍບາຍອົງການອະນາໄມໂລກ, ຊຶ່ງຖືວ່າການຂະຫຍາຍການນຳໃຊ້ຢາພື້ນເມືອງມີຄວາມ

ສຳຄັນໃນການປະກອບສ່ວນ ເຂົ້າໃນການຮັກສາສຸຂະພາບຂັ້ນຕົ້ນຂອງມວນມະນຸດ.

(ເອກະສານຂອງກອງປະຊຸມໜ່ວຍປະສານງານຄົ້ນຄ້ວາວິທີການທົດລອງປະສິດທິພາບ ແລະ ຄວາມປອດໄພຂອງຢາຈາກພືດ ) .

4-ທ່າອ່ຽງຂອງຊາວໂລກຊຶ່ງເຫັນໄດ້ຄວາມເປັນພິດ, ປະສິດທິພາບສຳຮອງທີ່ປະກົດອອກຫຼາຍ

ດ້ານໄປໃນແງ່ລົບ ຂອງການໃຊ້ຢາສັງເຄາະຈາກເຄມີ, ດັ່ງນັ້ນ ຈຶ່ງຫັນມາໃຊ້ຢາພື້ນເມືອງ ຢ່າງກວ້າງຂວາງ.

5- ເງື່ອນໄຂນິເວດວິທະຍາ ຂອງປະເທດເຮົາອຸດົມສົມບູນໄປດ້ວຍ ຊັບພະຍາກອນການຢາທີ່ເປັນແຫຼ່ງເຊື້ອອຳນວຍຄວາມສະດວກທີ່ສຸດໃຫ້ຊາວຜູ້ອອກແຮງງານບັນດາເຜົ່າສາມາດປະຕິບັດການຮັກສາສຸຂະພາບດ້ວຍຕົນເອງ ( Auto - medication ) ດ້ວຍການນຳໃຊ້ຫວ້ານຢາຕາມ ຕຳລາແຜນບູຮານ ຂອງປູ່ຍ່າຕາຍາຍເຮົາ.

สแกนด้วย CamScanner

6 - ພື້ນຖານທາງດ້ານເສດຖະກິດ ວັດທະນາທຳສັງຄົມ, ປະເພນີຮີດຄອງ ແລະ ມູນເຊື້ອອັນດີງາມຂອງຊາດເຮົາ ແລະ ພື້ນຖານວັດຖຸເຕັກນິກສຳຫຼັບການຄົ້ນຄວ້າວິທະຍາສາດ ໃນສະພາບຕົວຈິງ ໃນປະຈຸບັນ ຂອງປະເທດເຮົາ.

## III - *<u>ເນື້ອໃນລະອຽດຂອງນະໂຍບາຍແຫ່ງຊາດວ່າດ້ວຍການສົ່ງເສີມການແພດ ແລະ ຢາພື້ນເມືອງ</u>* :

ນະໂຍບາຍແຫ່ງຊາດວ່າດ້ວຍການສົ່ງເສີມການແພດ ແລະ ຢາພື້ນເມືອງປະກອບດ້ວຍ 7 ຂໍ້ດັ່ງຕໍ່ໄປນີ້ :

### 1 - ວ່າດ້ວຍການຈັດຕັ້ງລະບົບຕາໜ່າງການແພດພື້ນເມືອງ :

ເພື່ອຜັນຂະຫຍາຍແນວທາງສາທາລະນະສຸກຂອງພັກ ແລະ ລັດໃຫ້ເປັນຮູບປະທຳ, ໂດຍສະເພາະ ແມ່ນ ການປະສານ ສົມທົບ ລະຫວ່າງ ສອງ ຂົງເຂດການແພດ - ການຢາທັນສະໄໝ ແລະ ຢາພື້ນເມືອງ, ກະຊວງສາທາລະນະສຸກສົ່ງເສີມບັນດາຮາກຖານ ສາທາລະນະສຸກ ຂັ້ນຕ່າງໆ ສົມທົບກັບສະຖາບັນຄົ້ນຄວ້າຕົ້ນໄມ້ເປັນຢາຈັດຕັ້ງໜ່ວຍງານການແພດພື້ນເມືອງ-ຊັບພະຍາກອນການຢາ ດ້ວຍຮູບແບບ ທີ່ ແທດເໝາະກັບສະພາບຕົວຈິງຂອງຮາກຖານຕົນ.

### 2 - ວ່າດ້ວຍນະໂຍບາຍທາງດ້ານວັດຖຸ ແລະ ຈິດໃຈ ຕໍ່ໝໍຢາພື້ນເມືອງ :

ອີງຕາມລະດັບຄວາມຮູ້ຄວາມສາມາດ, ຜົນງານຕົວຈິງ ແລະ ຜົນສຳເລັດໃນການ ນຳໃຊ້ຢາພື້ນເມືອງ, ພອນສະຫວັນພິເສດ, ອິດທິພົນຊື່ສຽງ, ຄວາມນິຍົມຊົມຊອບຢ່າງກວ້າງຂວາງ ຂອງປະຊາຊົນຕໍ່ໝໍຢາພື້ນເມືອງ, ໂດຍໄດ້ຮັບການຄົ້ນຄວ້າພິຈາລະນາຈາກຮາກຖານ ສາທາລະນະສຸກມີນະໂຍບາຍໃຫ້ ບຳເນັດ, ການຫຼຽນຊັ້ນ, ການຍ້ອງຍໍ ແລະ ຈັດສົ່ງໃຫ້ ໄປທັດສະນະສຶກສາ ພາຍໃນ ຫຼື ຕ່າງປະເທດ ຕາມຄວາມເໝາະສົມ ຂອງ ແຕ່ລະ ລະດັບ ຂອງ ໝໍຢາພື້ນເມືອງ. ສ່ວນເງື່ອນໄຂ ແລະ ມາດຖານນັ້ນ ຈະມີບົດແນະນຳຕ່າງຫາກ.

ພະເຖລານຸລະ ທີ່ມີຄວາມຊຳນິຊຳນານ, ມີຜົນງານ, ຜົນສຳເລັດໃນການປິ່ນປົວ ດ້ວຍ ຢາພື້ນເມືອງ, ມີຊື່ສຽງໂດ່ງດັງ, ໄດ້ອອກຕົນຍາດຍິ່ມ ສົນປ່ອຍນິຍົມຊົມຊອບ, ອົງການ ພຸດທະສາສະໜາສຳພັນຂັ້ນຕ່າງໆ ສະເໜີຜ່ານ ສະຖາບັນຄົ້ນຄວ້າຕົ້ນໄມ້ເປັນຢາ ພິຈາລະນາຄົ້ນຄວ້າ ເພື່ອລາຍງານຂັ້ນກະຊວງສາທາລະນະສຸກ ຫຼື ລັດຖະບານ ປະຕິບັດການຍ້ອງຍໍ, ຫຼຽນຊັ້ນ ຫຼື ໃຫ້ບຳເນັດຕາມທີ່ເໝາະສົມ.

สแกนด้วย CamScanner

3 - ວ່າດ້ວຍການສ້າງ ໂດຍການຊ່ວຍເຫຼືອດ້ານວັດຖຸອຸປະກອນ, ເພື່ອມີ ອຳນວຍຄວາມສະດວກ ໃຫ້ການ ເຄື່ອນໄຫວວິຊາສະເພາະ :

- ຂັ້ນສູນກາງ ( ສະຖາບັນຄົ້ນຄ້ວາຕົ້ນໄມ້ເປັນຢາ ) :

ດ້ວຍການການນຳໃຊ້ທຶນທີ່ໄດ້ຮັບຈາກງົບປະມານ ແລະ ທຶນຊ່ວຍເຫຼືອ ຈາກອົງການຈັດຕັ້ງສາກົນ,

ສະຖາບັນຄົ້ນຄ້ວາຕົ້ນໄມ້ເປັນຢາຕ້ອງດຸ່ນດ່ຽງການໃຊ້ຈ່າຍຢ່າງສົມເຫດສົມຜົນ ເຂົ້າໃນແຕ່ລະວຽກງ ານ, ດ້ວຍການການນຳໃຊ້ທຶນທີ່ໄດ້ຮັບຈາກງົບປະມານ ແລະ ທຶນຊ່ວຍເຫຼືອ ຈາກອົງການຈັດຕັ້ງສາກົນ, ສະຖາບັນຄົ້ນຄ້ວາຕົ້ນໄມ້ເປັນຢາຕ້ອງດຸ່ນດ່ຽງການໃຊ້ຈ່າຍຢ່າງສົມເຫດສົມຜົນ ເຂົ້າໃນແຕ່ລະວຽກງານ, ເຊັ່ນ : ການກໍ່ສ້າງ ແລະ ປັບປຸງພື້ນຖານວັດຖຸເຕັກນິກ ສຳຄັນ ການຄົ້ນຄ້ວາວິທະຍາສາດ ເພື່ອຮັບປະກັນພາລະບົດບາດຊັ້ນນຳທ້ອງຖິ່ນ, ຊ່ວຍເຫຼືອທ້ອງຖິ່ນ ( ສະຖາບັນ ) ໃນການປັບປຸງ ວຽກງານວິຊາສະເພາະ, ເພື່ອໃຫ້ສະຖາບັນມີຄວາມສາມາດ ເຄື່ອນໄຫວໄດ້ຕາມພາລະບົດບາດຂອງຕົນ.

- ຂັ້ນ ແຂວງ ( ສະຖາບັນ ຢາພື້ນເມືອງ - ຊັບພະຍາກອນການຢາ ) :

ລົດລົງເສີມການຈັດຕັ້ງສຳຫຼວດຊັບພະຍາກອນ (ສືບຄົ້ນ), ຂຸດຄົ້ນ, ປຸງແຕ່ງ ແລະ ຈຳໜ່າຍຢາພື້ນເມືອງຢູ່ສະຖາບັນເພື່ອສ້າງລາຍຮັບມາໃຊ້ຈ່າຍເຂົ້າໃນການສືບຕໍ່ ປັບປຸງບູລະນະພື້ນຖານວັດຖຸເຕັກນິກ ຂອງສະຖາບັນ.

- ຂັ້ນເມືອງ: ຫ້ອງການສາທາລະນະສຸກເມືອງຈັດຕັ້ງໜ່ວຍປິ່ນປົວດ້ວຍຢາພື້ນເມືອງໃນໂຮງໝໍເມືອງຂອງຕົນ.

- ຂັ້ນບ້ານ: ຈັດຕັ້ງໝໍຢາພື້ນເມືອງປະຈຳບ້ານ ໂດຍມີການຄົ້ນຄ້ວານະໂຍບາຍອັນເໝາະສົມຕໍ່ໝໍຢາພື້ນເມືອງ ຕາມຄວາມສາມາດຕົວຈິງຂອງແຕ່ລະບ້ານ.

## 5 - ວ່າດ້ວຍນະໂຍບາຍ ນຳເອົາຢາພື້ນເມືອງ ສົມທົບຢ່າງແໜ້ນແຟ້ນ ກັບວຽກງານຮັກສາສຸຂະພາບ ຂັ້ນຕົ້ນ :

ເພື່ອບໍລິການດ້ານສາທາລະນະສຸກ ຢ່າງຮອບດ້ານ ແລະ ທົ່ວເຖິງ, ການນຳໃຊ້ຢາພື້ນເມືອງ ຕ້ອງປະສານສົມທົບກັບ ໂຄງການຮັກສາສຸຂະພາບຂັ້ນຕົ້ນ, ອົງການວິຊາສະເພາະທີ່ກ່ຽວຂ້ອງ ຕ້ອງມີແຜນການລວມ ເພື່ອປະຕິບັດການປະສານສົມທົບດັ່ງກ່າວ. ນຳໃຊ້ທຶນຊ່ວຍເຫຼືອ ຂອງ ອົງການຈັດຕັ້ງສາກົນ ເພື່ອຮຽບຮຽງ ເອກະສານກ່ຽວກັບ ຢາພື້ນເມືອງ, ຈັດສຳມະນາ ແນະນຳ ການນຳໃຊ້ຢາພື້ນເມືອງແບບງ່າຍດາຍ, ການປູກຕົ້ນໄມ້ເປັນຢາໃນສວນຄົວ, ການນຳໃຊ້ສື່ມວນຊົນເພື່ອເຜີຍແຜ່ ວິທີປິ່ນປົວພະຍາດດ້ວຍຕົນເອງ ໂດຍນຳໃຊ້ຢາພື້ນເມືອງ.



สแกนด้วย CamScanner

5 - ນະໂຍບາຍຄົ້ນຄ້ວາວິທະຍາສາດ ດ້ານຢາພື້ນເມືອງ - ຊັບພະຍາກອນການຢາ :

ສະຖາບັນຄົ້ນຄ້ວາຕົ້ນໄມ້ເປັນຢາ ແລະ ສະຖາບັນຢາພື້ນເມືອງ ຂອງ ແຂວງມີໜ້າທີ່ສຳຫຼວດຊັບ ພະຍາກອນການຢາ, ຕຳລາຢາ ຂອງ ແຕ່ລະທ້ອງຖິ່ນເພື່ອເກັບກຳຂໍ້ມູນຮັບໃຊ້ ການຄົ້ນຄ້ວາວິທະຍາສາດ, ການຂຸດຄົ້ນ , ການປຸງແຕ່ງ ແລະຈຳໜ່າຍ. ໂດຍສະເພາະ ຊັບພະຍາກອນການຢາ , ຕຳລາຢາ ທີ່ມີປະສິດທິພາບ ໂດຍສຶກສາວິທະຍາສາດ , ຕົ້ນຢາຕຳລາ ທີ່ສາມາດນຳເຂົ້າ ສູ່ການຜະລິດທຸລະກິດ ແລະ ສົ່ງອອກ. ການຂຸດຄົ້ນຕ້ອງມີແຜນການ ແລະ ຕ້ອງ ດຳເນີນໄປຄຽງຄູ່ກັບການປູກແທນ.

ຂະແໜງການວິຊາສະເພາະທີ່ກ່ຽວຂ້ອງຂັ້ນສູງກາງ ມີໜ້າທີ່ຄົ້ນຄ້ວານຳໃຊ້ : ການວິໄຈໝວດທາດ, ຂັດຕາສ່ວນທາດທີ່ມີປະສິດທິພາບ, ວິທີການຖອດສີດ, ວິທີການປຸງແຕ່ງແລະດັດແປງ ຮູບຢາຕະຫຼອດ ເຖິງການທົດລອງ ປະສິດທິພາບ ໂດຍວິທະຍາ ແລະ ຄວາມປອດ ໄພ ໃນການນຳໃຊ້ຢາພື້ນເມືອງ ເພື່ອຄັດຈ້ອນເລືອກເຟັ້ນເອົາຕຳລາຢາທີ່ດີ, ນຳໃຊ້ຖືກຈຸດ ແລະ ຖືກຕ້ອງຕາມພະຍາດ.

6 - ນະໂຍບາຍສະຫງວນລິຂະສິດຕຳລາຢາພື້ນເມືອງ, ບາດກ້າວການຜະລິດ :

ທຸກການວິຊາສະເພາະຢາພື້ນເມືອງ ທັງພາກລັດ ແລະ ເອກະຊົນ ມີສິດສະຫງວນລິຂະສິດຕຳລາ ແລະ ບາດກ້າວການຜະລິດ ຂອງ ຕົນ. ການມອບສິດ ລິຂະສິດດັ່ງກ່າວແມ່ນອີງຕາມສັນຍາຂອງທັງສອງຝ່າຍທີ່ໄດ້ລົງລາຍເຊັນກັນໄວ້ຢ່າງເປັນທາງການ. ( ຕຳລາຢາທີ່ຈະສະຫງວນລິຂະສິດໄດ້ນັ້ນຕ້ອງແມ່ນ ຕຳລາທີ່ໄດ້ຂຶ້ນທະບຽນເປັນທາງການແລ້ວ ).

7 - ການຂຶ້ນທະບຽນວິຊາສະເພາະ ຂອງ ທົວໜ່ວຍທຸລະກິດຢາພື້ນເມືອງ :

ເພື່ອຮັບປະກັນຄຸນນະພາບ ແລະ ຄວາມປອດໄພ ຂອງ ການນຳໃຊ້ຢາພື້ນເມືອງ, ທຸກໆທຸລະກິດ ຢາພື້ນເມືອງທັງພາກລັດ ແລະ ພາກເອກະຊົນ ຕ້ອງໄດ້ຂຶ້ນທະບຽນ, ມີໃບອະນຸຍາດດ້ານວິຊາສະເພາະ ຂອງ ໂຮງງານ, ຫ້າງຮ້ານ ຕາມຂໍ້ກຳນົດທີ່ທາງກົມອາຫານແລະຢາ ກະຊວງສາທາລະນະສຸກ ໄດ້ວາງອອກ.

ວຽງຈັນ, ວັນທີ 27./12./96

ລັດຖະມົນຕີ ກະຊວງ ສາທາລະນະສຸກ.

ສາດສະດາຈານ ວັນນະເລດ ລາດສະໂບ



สแกนด้วย CamScanner